ວັນທີ: __________________

ເຖິງພໍ່ແມ່ຫລືຜູ້ປົກຄອງທີ່ຮັກແພງ:

ໂຮງຮຽນຂອງເຮົາໄດ້ຖືກເລືອກໃຫ້ເຂົ້າຮ່ວມ ການປະເມີນຄວາມກ້າວໜ້າຂອງການສຶກສາແຫ່ງປະເທດ (NAEP), ເຊິ່ງທົ່ວໄປແລ້ວເອີ້ນວ່າລາຍງານຜົນການສຶກສາຂອງປະເທດ. ນັກຮຽນໃນຫ້ອງຊັ້ນປໍ 4 ແລະ ຊັ້ນປໍ 8 ຈະເສັງ NAEP ໝົດ 50 ລັດພ້ອມດ້ວຍ ເຂດໂຄລັມເບຍ. ປີນີ້ NAEP ຈະປະຕິບັດການປະເມີນສາມວິຊາໃນລັດຂອງເຮົາ ແລະ ທົ່ວປະເທດ: ວິຊາອ່ານ, ວິຊາເລກ, ແລະ ວິຊາວິທະຍາສາດ. ເດັກແຕ່ລະຄົນທີ່ຖືກເລືອກຈະເສັງພຽງວິຊາໃດໜຶ່ງໃນຈໍານວນສາມວິຊານີ້.

ການປະເມີນ NAEP ຈະປະຕິບັດໃນວັນທີ ____________________________ ແລະ ຈະໃຊ້ເວລາເສັງປະມານ 1 ຊົ່ວໂມງເຄິ່ງ. ກຸ່ມນັກຮຽນຂອງເຮົາໃນຊັ້ນປໍ _______ ຈະຖືກເລືອກໃຫ້ເສັງໃນວິຊາອ່ານ, ເລກ, ຫລືວິຊາວິທະຍາສາດ ແລະ ລູກຂອງທ່ານອາດຈະຖືກເລືອກໃຫ້ມີພາກສ່ວນໃນການເສັງນີ້. *ຄໍາຕອບທັງໝົດຈະຮັກສາເປັນຄວາມລັບ, ແລະ ຜົນອອກກໍຈະບໍ່ຖືກລາຍງານຕໍ່ໂຮງຮຽນ ຫລື ຕໍ່ນັກຮຽນແຕ່ລະຄົນຜູ້ທີ່ມີສ່ວນຮ່ວມ.* ນີ້ໝາຍຄວາມວ່າບໍ່ມີບັນທຶກຊື່ຂອງນັກຮຽນຜູ້ທີ່ມີສ່ວນຮ່ວມເຂົ້າເສັງໃນ NAEP ໃສ່ໃບເສັງແຕ່ລະວິຊາ ແລະ ຈະບໍ່ເປັນການກະທົບກະເທືອນຕໍ່ໂຮງຮຽນ ຫລື ຂະແນກການຮຽນ ຫລື ຄວາມກ້າວໜ້າຂອງລູກຂອງທ່ານ.

ຂໍ້ມູນ ແລະ ຜົນອອກຂອງ NAEP ຈະໃຊ້ໃນລັດ ໂຣດ ໄອແລນດ໌ ເພື່ອເຮັດການຕັດສິນກ່ຽວກັບການສຶກສາ. ເພື່ອຈະຊ່ວຍໃນການຊີ້ນໍາການຕັດສິນນີ້, NAEP ຈະຖາມນັກຮຽນກ່ຽວກັບປະສົບການໃນໂຮງຮຽນຂອງເຂົາ, ປະສົບການຂອງຊີວິດ ແລະ ສິ່ງທີ່ຄູໄດ້ສອນໃນຫ້ອງຮຽນ ພ້ອມກັນກັບຄໍາຖາມວິຊາຕ່າງໆ. ຄໍາຖາມເຫລົ່ານີ້ຈະບໍ່ຖາມກ່ຽວກັບຄວາມເຊື່ອສ່ວນຕົວ ຫລື ຄວາມນຶກຄິດ. ນັກຮຽນອາດຈະລະວັ້ນຄໍາຖາມໃດກໍຕາມ ຫລື ສ່ວນການເສັງທີ່ເຂົາບໍ່ຢາກຕອບ. ຖ້າຫາກທ່ານບໍ່ຕ້ອງການທີ່ຈະໃຫ້ລູກຂອງທ່ານມີສ່ວນໃນການເສັງນີ້, ກະລຸນາຕິດຕໍ່ ______________________ ທີ່ _________________. **ຄໍາຕອບທັງໝົດຕ້ອງຂຽນເປັນລາຍລັກອັກສອນ ແລະ ໂຮງຮຽນຕ້ອງໄດ້ຮັບບໍ່ໃຫ້ຊ້າເກີນ___________.** ເຮົາຂໍສະແດງເຖິງຄວາມຮູ້ຄຸນຄ່າຂອງເດັກທຸກຄົນຜູ້ທີ່ໄດ້ຖືກເລືອກໃຫ້ເຂົ້າຮ່ວມ. ນັກຮຽນຜູ້ທີ່ເຂົ້າຮ່ວມໃນ NAEP ມີພາກສ່ວນສໍາຄັນໃນການເຮັດໃຫ້ເຫັນວ່າເດັກໃນລັດຂອງເຮົາ ຫລື ປະເທດຂອງເຮົາຮຽນຮູ້ຫຍັງແດ່.

ສຳລັບຂໍ້ມູນເພີ່ມເຕີມຂອງຜົນກ່ຽວກັບ NAEP, ທ່ານສາມາດເບິ່ງ ແວບໄຊ ຂອງກະຊວງການສຶກສາຂອງລັດ ໂຣດ ໄອແລນດ໌ (http://www.ride.ri.gov/assessment/naep.aspx) ຫລື ແວບໄຊຂອງ ລາຍງານຜົນການສຶກສາຂອງປະເທດ (The Nation's Report card) http://nces.ed.gov/nationsreportcard. ຖ້າຫາກທ່ານມີຄຳຖາມ, ຂໍໃຫ້ຕິດຕໍ່ Heather Heineke Agnew ເລກໂທລະສັບ 222-8493 ຫລື ທີ່ Heather.Agnew@ride.ri.gov. ມີປື້ມນ້ອຍເຊິ່ງເປັນຕົວຢ່າງຂອງຄຳຖາມທີ່ຄ້າຍໆກັນກັບຄຳຖາມທີ່ຈະຖາມຕອນເສັງຂອງປີນີ້ມີຢູ່ໃນທັງສອງ ແວບໄຊ ແລະ ຢູ່ໃນຫ້ອງການຂອງໂຮງຮຽນ ຖ້າຫາກທ່ານຢາກເຫັນວ່າການເສັງຕ່າງໆເປັນແນວໃດ. ຖ້າຫາກທ່ານມີຄຳຖາມ ຫລື ຄວາມສົນໃຈ, ກະລຸນາຕິດຕໍ່ _______________________.

ດ້ວຍຄວາມຈິງໃຈ,

ຄູໃຫຍ່, (ຊື່ຂອງໂຮງຮຽນ)